**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ເມືອງສາລະວັນ

ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງ.

ເລກທີ..0??......./ພບຕ.

ສາລະວັນ, ວັນທີ...04.03.2026

# ໜັງສືແຈ້ງການເຊີນ
# ເຂົ້າຮ່ວມປະມູນ(ຈັດຊື້-ຈັດຈ້າງ).

ເຖິງ: ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

ເລື່ອງ: ປະກາດແຈ້ງການເຊີນເຂົ້າຮ່ວມການປະມູນ (ຈັດຊື້-ຈັດຈ້າງ) ໂຄງການ ຟື້ນຟູສ້ອມແປງຕາບຂຸມຮັງໄກ່ເປັນຈຸດໃນຕົວເມືອງ, ສ້ອມແປງເສັ້ນທາງເຂົ້າບ້ານນາໂຄກ ແລະ ທາງເຂົ້າສາງແກ້ງກະທຽມ, ລວງຍາວ 3.89 Km, ລວງກ້ວາງ 6 m ເມືອງສາລະວັນ.

- ອີງຕາມ ກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍ ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ອີງຕາມ ສະບັບເລກທີ 72 /ສພຊ, ນະຄອນຫຼວງວຽງຈັນ ລົງວັນທີ 15 ທັນວາ 2015 ກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ).
- ອີງຕາມ ຂໍ້ຕົກລົງ ຂອງເຈົ້າເມືອງ ສະບັບເລກທີ 634/ຈມ, ລົງວັນທີ 30 ກັນຍາ 2024.ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງ ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ.
- ອີງຕາມ ແຈ້ງການຂອງຫ້ອງການການເງິນເມືອງສາລະວັນ, ເລກທີ 63/ກງມ.ສວ, ລົງວັນທີ 03/03/ 2026 ກ່ຽວກັບ ແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026.

**ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ** ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ຫາກບໍລິສັດໃດມີຄວາມສົນໃຈ ຕ້ອງການເຂົ້າຮ່ວມການປະມູນ ໂຄງການ ຟື້ນຟູສ້ອມແປງຕາບຂຸມຮັງໄກ່ເປັນຈຸດໃນຕົວເມືອງ, ສ້ອມແປງເສັ້ນທາງເຂົ້າບ້ານນາໂຄກ ແລະ ທາງເຂົ້າສາງແກ້ງກະທຽມ, ລວງຍາວ 3.89 Km, ລວງກ້ວາງ 6 m ເມືອງສາລະວັນ ເພື່ອຮັບເໝົາກໍ່ສ້າງ ເຊິ່ງຜູ້ສົນໃຈຕ້ອງມີໃບດໍາເນີນທຸລະກິດ ດ້ານການກໍ່ສ້າງ ຂົວທາງ ຄົບຖ້ວນຕາມລະບຽບກົດໝາຍ ສ່ວນການສໍາລະສະສາງ ແມ່ນຕາມສົກງົບປະມານທີ່ມີໃນແຕ່ລະປີ, ການເຂົ້າຮ່ວມການປະມູນມີລາຍລະອຽດດັ່ງລຸ່ມນີ້:

1. ໂຄງການ ຟື້ນຟູສ້ອມແປງຕາບຂຸມຮັງໄກ່ເປັນຈຸດໃນຕົວເມືອງ, ສ້ອມແປງເສັ້ນທາງເຂົ້າບ້ານນາໂຄກ ແລະ ທາງເຂົ້າສາງແກ້ງກະທຽມ, ລວງຍາວ 3.89 Km, ລວງກ້ວາງ 6 m ເມືອງສາລະວັນ ເວລາການກໍ່ສ້າງແມ່ນ 24 ເດືອນ, ເລີ່ມລົງມືກໍ່ສ້າງນັບແຕ່ມື້ເຊັນສັນຍາ ເປັນຕົ້ນໄປ.

สแกนด้วย CamScanner

2. ເອກະສານປະມູນສາມາດສະເໜີຊື້ ທີ່ ຫ້ອງການ ພັດທະນາ ແລະ ບໍລິການຕົວເມືອງສາລະວັນ ໃນເວລາທາງລັດຖະການ ມີລາຄາ ຊຸດລະ 1,000,000 ກີບ( ໜຶ່ງລ້ານກີບ)ການປະມູນ ມີໄລຍະເວລາ ພຽງ 1 ວັນ.
3. ກອງປະຊຸມການປະມູນຈະໄດ້ຈັດຂຶ້ນ ເວລາ 08:30 ໃນວັນທີ 08/04/2026 ທີ່ຫ້ອງປະຊຸມ ຫ້ອງການພັດທະນາ ແລະ ບໍລິການຕົວເມືອງສາລະວັນ.

**ໝາຍເຫດ:** ເອກະສານປະກອບໃນການປະມູນມີດັ່ງນີ້:

| | | |
|---|---|---|
| 1. | ໃບສະເໜີຂໍອະນຸຍາດຈັດຕັ້ງປະຕິບັດໂຄງການ(ໃບເຈດຈຳນົງ)ແບບຟອມຍື່ນປະມູນ | ຈຳນວນ 01 ໃບ. |
| 2. | ໃບຄິດໄລ່ລາຄາແຜ່ນຜັງການກໍ່ສ້າງຄົບຊຸດ | ຈຳນວນ 01 ຊຸດ. |
| 3. | ໃບທະບຽນວິສາຫະກິດ (ຈາກ ພະແນກ ການຄ້າແຂວງ) | ຈຳນວນ 01 ໃບ. |
| 4. | ໃບໄລ່ລຽງອາກອນປີ2024ໃຫ້ຖືກຕ້ອງຕາມລະບຽບກົດໝາຍ | ຈຳນວນ 01 ໃບ. |
| 5. | ໃບຢັ້ງຢືນ ຜົນງານຜ່ານມາ | ຈຳນວນ 01 ໃບ. |
| 6. | ໜັງສືຄ້ຳປະກັນການປະມູນ 2% ຂອງມູນຄ່າເຊັນຢັ້ງຢືນຈາກສະຖາບັນການເງິນ | ຈຳນວນ 01 ໃບ. |
| 7. | ໃບປະກາດສະນິຍະບັດຂອງພະນັກງານວິຊາການ ຂົວທາງ ຂອງບໍລິສັດ | ຈຳນວນ 03 ສຫ. |
| 8. | ຕາຕະລາງແຜນປະຕິບັດວຽກ ແລະ ກຳນົດເວລາການກໍ່ສ້າງ | ຈຳນວນ 01 ຊຸດ. |
| 9. | ໃບຢັ້ງຢືນ ຖານະການເງິນຈາກທະນະຄານ ອາຍຸບໍ່ເກີນ 3 ເດືອນ | ຈຳນວນ 01 ໃບ. |
| 10. | ໃບອະນຸຍາດ ຂໍສືບຕໍ່ ດຳເນີນທຸລະກິດຈາກຂະແໜງ ຍທຂ | ຈຳນວນ 01 ໃບ. |
| 11. | ຕ້ອງມີໃບມອບສິດດຳເນີນທຸລະກິດຈາກບໍລິສັດແມ່(ຖ້າໄດ້ຮັບຈາກຜູ້ອື່ນ) | ຈຳນວນ 01 ໃບ. |
| 12. | ໃບຊີວະປະຫວັດຫຍໍ້ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ | ຈຳນວນ 01 ຊຸດ. |
| 13. | ໃບຢັ້ງຢືນທີ່ຢູ່ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ | ຈານວນ 01 ຊຸດ. |
| 14. | ເອກະສານອື່ນໆທີ່ກ່ຽວຂ້ອງການເປີດບໍລິສັດ. | |

ດັ່ງນັ້ນ, ຈຶ່ງແຈ້ງການ ມາເຖິງບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການດັ່ງກ່າວໃນຄັ້ງນີ້ ຕາມເນື້ອໃນ ແລະ ເງື່ອນໄຂຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ແຂວງສາລະວັນ
ຫ້ອງການ
ພັດທະນາ ແລະ ບໍລິການ
ຕົວເມືອງສາລະວັນ
ເມືອງສາລະວັນ

ບົວພັນ ພົມຈະເລີນ

สแกนด้วย CamScanner